**ກະຊວງກະສິກຳ ແລະ ສິ່ງແວດລ້ອມ**

**ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ**

ເງິນກູ້ເລກທີ: IDA No.673580-LA ແລະ IDA No.73590-LA, ລະຫັດໂຄງການ. P178545

**ປະກາດຮັບສະໝັກພະນັກງານ** - Request for Expression of Interest (REOI)

ຕຳແໜ່ງ: **ປົກປ້ອງສັງຄົມ ແລະ ບົດບາດຍິງ-ຊາຍ ຂັ້ນເມືອງ (District Social/Gender)**

ຮັບຜິດຊອບ 2 ເມືອງ ກະລຶມ+ດາກຈຶງ. ປະຈຳຫ້ອງການໂຄງການ ປຊກ ເມືອງກະລຶມ ແຂວງເຊກອງ.

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຮັບພະນັກງານສັນຍາຈ້າງ ຈຳນວນ 1, ຕຳແໜ່ງ: ປົກປ້ອງສັງຄົມ ແລະ ບົດບາດຍິງ-ຊາຍ ເມືອງ ເພື່ອມາປະຈຳຢູ່ຫ້ອງການໂຄງການ ປຊກ ທີ່ ເມືອງກະລຶມ ແຂວງເຊກອງ.

2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຜູ້ທີ່ສົນໃຈ ທີ່ມີຄຸນສົມບັດຄົບຖ້ວນຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຂ້າງລຸ່ມ ***ຍື່ນເອກະສານສະໝັກດ້ວຍຕົນເອງ*** ທາງອີເມວ ສົ່ງມາຕາມທີ່ຢູ່ Email: **info.hr@clearlaos.org** ນີ້ພ້ອມເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອ້າງອີງ ປະສົບການດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການ ຂອງທ່ານ ເພື່ອມາຮັບຜິດຊອບເຮັດວຽກດັ່ງກ່າວ:

   ➢ ເອກະສານຍື່ນສະໝັກ ປະກອບມີ:
      1. ໃບຄຳຮ້ອງຍື່ນສະໝັກງານ: ໃຫ້ລະບຸລະອຽດຊື່ຕຳແໜ່ງທີ່ສະໝັກ, ສະຖານທີ່ຫ້ອງການ ທີ່ສະເໜີເຂົ້າປະຈຳການ. ພ້ອມທັງປະສົບການຜ່ານມາທີ່ຄ້າຍຄືກັບວຽກທີ່ຍື່ນສະໝັກ, ລາຍຊື່ ແລະ ເບີໂທລະສັບ ຂອງຜູ້ທີ່ສາມາດຢັ້ງຢືນໃຫ້ທ່ານ ແລະ ທາງໂຄງການສາມາດສອບຖາມໄດ້ ປະມານ 3 ທ່ານ;
      2. ຊີວະປະຫວັດຜູ້ຍື່ນສະໝັກ ພ້ອມຮູບຖ່າຍ (ລະບຸລະອຽດ ກ່ຽວກັບລະດັບການສຶກສາ ແລະ ປະສົບການເຮັດວຽກຜ່ານມາ);
      3. ສຳເນົາໃບປະກາດຈົບການສຶກສາ ແລະ ໃບຄະແນນ, ໃບຢັ້ງຢືນຜ່ານການຝຶກອົບຮົມຕ່າງໆ;
      4. ສຳເນົາໃບຢັ້ງຢືນການເຮັດວຽກຜ່ານມາ ວຽກທີ່ຄ້າຍຄືກັບວຽກນີ້, ໃບແຈ້ງໂທດ, ໃບຢັ້ງຢືນທີ່ຢູ່, ບັດປະຈຳຕົວ, ໃບຂັບຂີ່.

   ➢ ຂໍ້ກຳນົດເງື່ອນໄຂເບື້ອງຕົ້ນ ຂອງຜູ້ສະມັກທີ່ສາມາດຍື່ນສະມັກໄດ້ ປະກອບມີດັ່ງນີ້:
      - ລະດັບທາງດ້ານການສຶກສາ: ຕ້ອງຮຽນຈົບມີໃບປະກາດວິຊາຊີບຊັ້ນສູງຂຶ້ນໄປ ສາຂາດ້ານພັດທະນາສັງຄົມ, ວິທະ ຍາສາດສັງຄົມ ແລະ ການພັດທະນາຊຸມຊົນ;
      - ປະສົບການການເຮັດວຽກຜ່ານມາ: ຢ່າງໜ້ອຍຕ້ອງເຮັດວຽກຜ່ານມາແລ້ວ 3 (ສາມ) ປີ ທີ່ກ່ຽວຂ້ອງກັບວຽກດ້ານການຄຸ້ມຄອງ ແລະ ປົກຄອງທາງດ້ານສັງຄົມ, ການພັດທະນາຊຸມຊົນ ໃນເຂດຊົນນະບົດຫ່າງໄກສອກ ຫລີກ. ມີປະສົບການເຄີຍເຮັດວຽກກັບຊຸມຊົນທຸກຍາກ ແລະ ຫລາກຫລາຍຊົນເຜົ່າ ແລະ ວຽກກ່ຽວກັບບັນຫາບົດບາດຍິງ-ຊາຍ;
      - ມີຄວາມຮູ້ໃນການນຳໃຊ້ຄອມພິວເຕີ ໂດຍສະເພາະໂປຣແກຣມ MS Office.

3. ຂໍ້ມູນເພີ່ມເຕີມ ລວມທັງຂໍ້ກຳນົດເງື່ອນໄຂການອ້າງອີງຕ່າງໆ ທ່ານສາມາດພົວພັນເອົາໄດ້ ໃນເວລາເຮັດວຽກ ນັບແຕ່ເວລາ 08:00 ໂມງ ຫາ 16:00 ໂມງ, ແຕ່ວັນຈັນ ເຖິງ ວັນສຸກ ທີ່ຫ້ອງການ ປຊກ, ຕັ້ງຢູ່ໃນຫ້ອງວ່າການລັດຖະບານ, ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ ຫລື ເຂົ້າເບິ່ງໃນເວັບໄຊ໌ ຂອງໂຄງການທີ່: http://clears.org/vacancy.

4. ເອກະສານຍື່ນສະມັກ ຕ້ອງສົ່ງເປັນລາຍລັກອັກສອນ ດ້ວຍຕົນເອງ ສົ່ງທາງອີເມວ ທີ່: info.hr@clearlaos.org. ຫ້ອງການໂຄງການ ປຊກ ຈະພົວພັນຫາຜູ້ທີ່ຖືກຄັດເລືອກທີ່ເໝາະສົມທີ່ສຸດ ທາງອີເມວ ພາຍຫລັງທີ່ໄດ້ຮັບອະນຸມັດເປັນທາງການ ຈາກຜູ້ໃຫ້ທຶນ, **ວັນທີປິດຮັບເອກະສານຍື່ນສະມັກ ແມ່ນວັນທີ 21 ສິງຫາ 2026.**

ນະຄອນຫລວງວຽງຈັນ, ວັນທີ 07 ສິງຫາ 2026

ຮກ. ຜູ້ອຳນວຍການ

ປອ. ວົງປະພັນ ມະນີວົງ